# ບົດຮຽນໃນການສ້າງກອງທຶນກຳມະບານ ທຄຕລ



**# ໂດຍ : ຣັດສະໝີ ດວງສັດຈະ**

ການສ້າງຕັ້ງກອງທຶນຊ່ວຍເຫຼືອເຊິ່ງກັນ ແລະ ກັນຂອງກຳມະບານຮາກຖານທະນາຄານການຄ້າຕ່າງປະເທດລາວ (ທຄຕລ) ແມ່ນມີວັດຖຸປະສົງເພື່ອຊ່ວຍເຫຼືອແກ້ໄຂບັນດາສະມາຊິກກຳມະບານທີ່ຖືກເຈັບເປັນ, ເສຍຊີວິດ, ປຸກສ້າງສ້ອມແປງທີ່ພັກພາອາໄສ, ສ້າງເສດຖະກິດຄອບຄົວ ແລະ ອື່ນໆ ເຊິ່ງແຫຼ່ງທຶນດັ່ງກ່າວແມ່ນ ໄດ້ມາຈາກການປະກອບສ່ວນຂອງສະມາຊິກກຳມະບານໃນຮາກຖານ ທຄຕລ ຫຼື ຮາກຖານອື່ນກໍ່ໄດ້ໃນທຸກໆເດືອນ. ນອກນີ້ກໍໄດ້ມາຈາກດອກເບ້ຍເງິນຝາກ-ດອກເບ້ຍເງິນກູ້, ທຶນຊ່ວຍເຫຼືອຂອງອຳນາດການປົກຄອງ, ໄດ້ມາຈາກການຫາລາຍໄດ້ຂອງກຳມະບານ ແລະ ແຫຼ່ງອື່ນໆ.

ສະຫາຍ ຄຳຮູ້ ທອງທະວີ ປະທານຄະນະກຳມະບານ ຮາກຖານ ທຄຕລ ໄດ້ກ່າວເຖິງບົດຮຽນແຫ່ງການສ້າງຕັ້ງກອງທຶນຊ່ວຍເຫຼືອເຊິ່ງກັນ ແລະ ກັນຂອງກຳມະບານຮາກຖານ ທຄຕລ ຕໍ່ກອງປະຊຸມໃຫຍ່ຄັ້ງທີ່ VI ຂອງສະຫະພັນກຳມະບານທະນາຄານແຫ່ງ ສປປລາວ ໂດຍໄດ້ລາຍງານວ່າ : ກອງທຶນຂອງພວກເຮົາໄດ້ສ້າງຂຶ້ນໃນກາງເດືອນ ມິຖຸນາ ຂອງປີ 2002 ເບື້ອງຕົ້ນມີສະມາຊິກກອງທຶນ 157 ສະຫາຍ ເຊິ່ງຜູ້ໜຶ່ງປະກອບສ່ວນ 10.000 ກີບ/ເດືອນ ແລະ ນັບແຕ່ມື້ນັ້ນມາເຖິງປະຈຸບັນລະບຽບການຂອງ

ກອງທຶນໄດ້ມີການປັບປຸງນຕາມສະພາບການເຖິງ 8 ຄັ້ງ, ມາຮອດເດືອນພຶດສະພາຂອງປີນີ້ໄດ້ມີສະມາຊິກເພີ່ມຂຶ້ນ 327 ສະຫາຍ, ມີເງິນກອງທຶນທັງໝົດ 1.221.613.163 ກີບ ແລະ ໄລ່ມາຮອດກາງເດືອນມີຖຸນາ 2010 ໄດ້ປ່ອຍກູ້ໃຫ້ສະມາຊິກກຳມະບານກູ້ຢືມທັງໝົດ 645 ລາຍ ໃນມູນຄ່າ 5.384 ລ້ານກີບ.

ສະຫາຍປະທານກຳມະການຮາກຖານ ທຄຕລ ໄດ້ແຈ້ງຕື່ມເຖິງສິດຜົນປະໂຫຍດທີ່ໄດ້ຮັບໃນການສ້າງກອງທຶນເຊິ່ງກອງທຶນດັ່ງກ່າວມັນຄ້າຍຄືການຝາກປະຫຍັດຂອງສະມາຊິກເຊິ່ງຄະນະບໍລິຫານງານກອງທຶນຈະເຮັດບັນຊີຕິດຕາມການປະກອບສ່ວນຂອງສະມາຊິກ, ມາຮອດປະຈຸບັນສະມາຊິກລຸ້ນເກົ່າໄດ້ປະກອບສ່ວນກອງທຶນຄົນລະ 4 ລ້ານກີບ, ຖ້າຫາກເວລາມີສະມາຊິກຍົກຍ້າຍໄປຢູ່ບ່ອນອື່ນທາງຄະນະກອງທຶນກໍ່ຈະສົ່ງເງິນຄືນໃຫ້ທັງທຶດພ້ອມທັງເງິນປັນຜົນ, ສຳລັບປີກາຍນີ້ຄະນະກອງທຶນກໍໄດ້ແບ່ງເງິນປັນຜົນໜຶ່ງຄັ້ງຕາມລະບຽບການອັນໄດ້ເຮັດໃຫ້ທຸກຄົນມີຄວາມເພິ່ງພໍໃຈ ແລະ ຜົນປະໂຫຍດສູງສຸດທີ່ສະມາຊິກໄດ້ຮັບອີກກໍແມ່ນການໄດ້ອຸທິດຊ່ວຍເຫຼືອ ແລະ ແກ້ໄຂກັນໃນຍາມຫຍຸ້ງຍາກ ແລະ ຂັດສົນຂອງໝູ່ເພື່ອນສະມາຊິກດ້ວຍກັນທີ່ໄດ້ຮັບຄວາມເຈັບເປັນເອັນອຸ່ນ, ການເສຍຊີວິດ, ການເພີ່ມພູນສ້າງເສດຖະກິດຄອບຄົວ, ການປຸກສ້າງສ້ອມແປງທີ່ຢູ່ອາໄສ ເຊິ່ງທັງໝົດນັ້ນແມ່ນການຈັດຕັ້ງປະຕິບັດນະໂຍບາຍ ແນໃສ່ເພື່ອຍົກສູງຄຸນນະພາບຊີວິດຂອງສະມາຊິກກຳມະບານໃຫ້ດີຂຶ້ນບໍ່ຢຸດຢັ້ງ, ເປັນການປະກອບສ່ວນເຮັດວຽກງານການເມືອງເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວຈັດຕັ້ງປະຕິບັດໜ້າທີ່ ໃຫ້ໄດ້ຮັບຜົນດີຕາມຈິດໃຈຊີ້ນຳຂອງຄະນະພັກຮາກຖານ ທຄຕລ ແລະ ປະຕິບັດແຜນການຂອງຄະນະອຳນວຍການ ທຄຕລ ວາງອອກໃຫ້ໄດ້ຮັບຜົນສຳເລັດສູງຢ່າງບໍ່ຢຸດຢັ້ງ.